**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ
ກອງເລຂາຄະນະກຳມະການປະສານງານ
ກອງທຶນໂລກຕ້ານເອດ, ວັນນະໂຣກ ແລະ ໄຂ້ຍຸງ
ສປປ ລາວ

# ບົດບັນທຶກກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ ຄັ້ງທີ 4 - ສົກປີ 2017-2018

ກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ (CCM) ແມ່ນຈະໄດ້ຈັດຂຶ້ນທຸກໆ 3 ເດືອນເພື່ອປຶກສາຫາລື, ຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອໃນຮອບປະຈຸບັນ, ການຮັບຮອງ, ແລະ ການຕັດສິນບັນຫາຕ່າງໆກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄງການຂອງກອງທຶນໂລກ. ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນເປັນຄັ້ງທີ 4 ຂອງສົກປີ 2017-2018 ໂດຍການເປັນປະທານຂອງ ທ່ານ ຮສ. ດຣ. ພູທອນ ເມືອງປາກ, ຮອງລັດຖະມົນຕີກະຊວງສາທາລະນະສຸກ ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ.

**I. ວັນເວລາ:** ວັນພຸດ, ທີ 19 ກັນຍາ 2018, ເວລາ 8:30 ເຖິງ 16:30.

**II. ສະຖານທີ່:** ໂຮງແຮມດອນຈັນພາເລດ.

**III. ຜູ້ເຂົ້າຮ່ວມ:** ສະມາຊິກສົມບູນ ແລະ ສຳຮອງ ຈຳນວນ 26 ທ່ານ (ມີສິດອອກສຽງໄດ້ 17 ທ່ານ), ພາກສ່ວນອື່ນໆ ຈຳນວນ 21 ທ່ານ, ກອງເລຂາ ຄປກທລ ຈຳນວນ 04 ທ່ານ ລວມທັງໝົດ 51 ທ່ານ.

**IV. ວາລະກອງປະຊຸມ:**

1. ລາຍງານການຈັດຕັ້ງປະຕິບັດແຜນວຽກຂອງ CCM ປະຈຳສົກປີງົບປະມານ 2017-2018, ລວມທັງ ຕົວຊີ້ວັດດ້ານການຈັດຕັ້ງປະຕິບັດຂອງ CCM;
2. ປະເມີນການຈັດຕັ້ງປະຕິບັດວຽກງານປະຈຳປີໂດຍລວມຂອງ ກອງເລຂາ CCM;
3. ລາຍງານຜົນຂອງການລົງຕິດຕາມຊຸກຍູ້ການປະຕິບັດວຽກງານຢູ່ແຂວງວຽງຈັນ ລະຫວ່າງວັນທີ 4-7 ກັນຍາ 2018;
4. ແຜນວຽກຂອງ CCM ໃນສົກປີງົບປະມານ 2018-2019;
5. ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການກອງທຶນໂລກ ແລະ ວຽກງານການບໍລິຫານຄຸ້ມຄອງໂຄງການ, ລວມທັງ ກົນໄກການໄຫຼວຽນຂອງເງິນຊ່ວຍເຫຼືອ ແລະ ຂັ້ນຕອນການຂໍຍົກເວັ້ນພາສີ;
6. ລາຍງານການປະຕິບັດກິດຈະກຳຂອງຄະນະກຳມະການປະສານງານຂອງອົງການຈັດຕັ້ງທາງສັງຄົມ (NPA-KAP-PLWD CC);
7. ລາຍງານກ່ຽວກັບທຶນຊ່ວຍເຫຼືອໃຫ້ແຜນງານ ເຮສໄອວີ ແລະ ວັນນະໂຣກ ໃນພາກພື້ນຂອງກອງທຶນໂລກ;
8. ສະເໜີຂໍອະນຸມັດຊື້ຖົງຢາງອານາໄມ “Number One” ໂດຍນຳໃຊ້ເງິນຈາກລາຍຮັບຂອງໂຄງການ;
9. ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນສົມທົບຂອງລັດຖະບານ.

V. ການສະຫຼຸບສັງລວມໂດຍຫຍໍ້ກ່ຽວກັບຜົນຂອງການປຶກສາຫາລື ໃນກອງປະຊຸມ:

1. ຄະນະກຳມະການປະສານງານກອງທຶນໂລກ (CCM) ໄດ້ຮັບຟັງ ແລະ ຮັບຮອງເອົາ ເນື້ອໃນຕ່າງໆ ຄື:
   - ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນວຽກຂອງ CCM ປະຈຳສົກປີງົບປະມານ 2017-2018 ລວມທັງ ຕົວຊີ້ວັດດ້ານການຈັດຕັ້ງປະຕິບັດຂອງ CCM;
   - ຮັບຮອງເອົາແຜນວຽກຂອງ CCM ໃນສົກປີງົບປະມານ 2018-2019;
   - ຮັບຮອງເອົາການຂໍອະນຸມັດຊື້ຖົງຢາງອານາໄມ "Number One" ໂດຍນຳໃຊ້ເງິນຈາກລາຍຮັບຂອງໂຄງການ;
   - ໄດ້ເຮັດການປະເມີນການຈັດຕັ້ງປະຕິບັດວຽກງານປະຈຳປີໂດຍລວມຂອງ ກອງເລຂາ CCM;
   - ຟັງການລາຍງານຜົນການລົງຕິດຕາມວຽກງານໂຄງການສາມພະຍາດ ທີ່ແຂວງວຽງຈັນ;
   - ຟັງການລາຍງານຂອງ PMU ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການກອງທຶນໂລກ ແລະ ວຽກງານການບໍລິຫານຄຸ້ມຄອງໂຄງການ, ລວມທັງ ກົນໄກການໄຫຼວຽນຂອງເງິນຊ່ວຍເຫຼືອ ແລະ ຂັ້ນຕອນການຂໍຍົກເວັ້ນພາສີ;
   - ຟັງການລາຍງານການຈັດຕັ້ງປະຕິບັດກິດຈະກຳຂອງ CSO;
   - ຟັງລາຍງານຄວາມຄືບໜ້າຂອງການຂໍທຶນຊ່ວຍເຫຼືອໃຫ້ແກ່ແຜນງານ HIV ແລະ TB ໃນພາກພື້ນຂອງກອງທຶນໂລກ;
   - ຟັງການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນສົມທົບຂອງລັດຖະບານ.
2. ໃຫ້ຫ້ອງການ PR PMU ສົມທົບກັບກົມການເງິນ, ກະຊວງສາທາລະນະສຸກ ປຶກສາຫາລືກັບກົມການເງິນຕ່າງປະເທດ, ກະຊວງການເງິນ ເພື່ອສ້າງຄວາມເຂົ້າໃຈ ແລະ ຕົກລົງຮ່ວມກັນກ່ຽວກັບການໂອນເງິນຈາກ BCEL ໄປຫາ BOL;
3. ໃຫ້ກອງເລຂາ CCM ສັງລວມຂໍ້ມູນກ່ຽວກັບການຈັດຕັ້ງ ແລະ ຄະນະກາມະການປະສານງານ ຂອງອົງການຈັດຕັ້ງທາງສັງຄົມ ທີ່ເຮັດວຽກນຳກອງທຶນໂລກ ເຊັ່ນ: ພະນັກງານ, ກົນໄກການເຮັດວຽກ ແລະ ລະບຽບການ ໂດຍສົມທຽບຂໍ້ມູນທີ່ໄດ້ ໃສ່ກັບດຳລັດວ່າດ້ວຍ ອົງການຈັດຕັ້ງທາງສັງຄົມ ຂອງ ກະຊວງພາຍໃນ.
4. ໃຫ້ທີມງານທີ່ລົງຕິດຕາມກວດກາ ສັງລວມເອົາບັນຫາຫຼັກໆ ແລະ ວິທີການແກ້ໄຂບັນຫາ ຈາກບົດລາຍງານການລົງຕິດຕາມກວດກາທີ່ພາກສະໜາມ;
5. ໃຫ້ CSO ແລະ ຄູ່ຮ່ວມງານ ຈັດຕັ້ງປະຕິບັດແຜນວຽກຂອງໂຄງການໃຫ້ມີປະສິດທິຜົນ ສຳລັບສົກປີ 2017-2018 ແລະ ຫຼີກລ້ຽງບໍ່ໃຫ້ມີເງິນກິດຈະກຳຂອງໂຄງການເຫຼືອ.
6. ໃຫ້ແຜນງານ HIV ແລະ TB ສືບຕໍ່ສົນທະນາປຶກສາຫາລື ແລະ ຕໍ່ລອງ ກ່ຽວກັບທຶນຊ່ວຍເຫຼືອໃຫ້ແຜນງານ HIV ແລະ TB ໃນພາກພື້ນຂອງກອງທຶນໂລກ.

ກອງປະຊຸມດັ່ງກ່າວນີ້ ໄດ້ສິ້ນສຸດລົງໃນເວລາ 16:30 ຂອງວັນທີ 19 ກັນຍາ 2018.

ນະຄອນຫຼວງວຽງຈັນ, ວັນທີ 24/09/2018

**ປະທານກອງປະຊຸມ**

ທ່ານ ຮສ. ດຣ. ພູທອນ ເມືອງປາກ

**ຜູ້ສັງລວມເນື້ອໃນກອງປະຊຸມ**

ທ່ານ ໜູກອນ ທະລັງສີ